## ການຄັດກອງກວດຫາໂຣກມະເຮັງແມ່ນຫຍັງ?

ການກວດຄັດກອງຫາໂຣກມະເຮັງສາມາດຊອກຫາອາການເບື້ອງຕົ້ນຂອງມະເຮັງໄດ້. ການກວດນີ້ຍັງສາມາດຊອກຫາການປ່ຽນແປງຂອງເຊລ(ຈຸລັງ) ຫຼືຊອກຫາການຕິດເຊື້ອໃນຮ່າງກາຍຂອງທ່ານທີ່ອາດຈະກໍ່ໃຫ້ເກີດໂຣກມະເຮັງໃນອະນາຄົດ.

ລັດຖະບານອອສເຕຣເລັຍສະເໜີໂຄງການກວດຄັດກອງໂຣກມະເຮັງລະດັບຊາດສາມໂຄງການເພື່ອຊອກຫາສັນຍານເບື້ອງຕົ້ນຂອງມະເຮັງລຳໄສ້, ເຕົ້ານົມ ແລະ ປາກມົດລູກ. ຖ້າພົບໂຣກມະເຮັງໃນໄລຍະເລີ້ມຕົ້ນ, ໂອກາດທີ່ຈະລອດຊີວິດແມ່ນສູງຂຶ້ນ.

**ໂຄງການກວດຄັດກອງໂຣກມະເຮັງແມ່ນຟຣີຖ້າທ່ານມີບັດ** ເມດິແຄຣ໌ ສີຂຽວ ຫຼື ສີຟ້າ. ຖ້າທ່ານບໍ່ມີບັດ ເມດິແຄຣ໌ ໃຫ້ລົມກັບນາຍໝໍຈີພີ (GP) ຂອງທ່ານກ່ຽວກັບຄ່າກວດທັງໝົດ.

## ການກວດມະເຮັງແບບຄັດກອງສາມາດຊ່ວຍຊີວິດທ່ານໄດ້.

ຖ້າທ່ານຕ້ອງການຂໍ້ມູນເພີ້ມເຕີມກ່ຽວກັບການກວດມະເຮັງ ລຳໄສ້, ເຕົ້ານົມ ຫຼື ປາກມົດລູກ, ໃຫ້ຢ້ຽມເບິ່ງ

- cancersa.org.au
- breastscreen.sa.gov.au
- wellbeingsa.sa.gov.au/cervicalscreening

ຖ້າຫາກວ່າທ່ານຕ້ອງການສະໜັບສະໜູນຫຼັງຈາກການກວດພົບວ່າເປັນມະເຮັງ, ຈົ່ງໂທຫາ **Cancer Council SA** ຕາມເບີ **13 11 20**.



ຊັບພະຍາກອນນີ້ໄດ້ຖືກພັດທະນາໂດຍ Wellbeing SA, BreastScreen SA ແລະ Cancer Council SA.

ຊັບພະຍາກອນດັ່ງກ່າວໄດ້ຖືກພັດທະນາຄັ້ງທຳອິດໃນປີ 2017 ໃນລະຫວ່າງໂຄງການທູດກວດໂຣກມະເຮັງແບບຄັດກອງຂອງແມ່ຍິງ CALD.

Government of South Australia
Wellbeing SA

Breast Screen SA

phn COUNTRY SA
An Australian Government Initiative

Cancer Council SA

ສຳລັບຂໍ້ມູນຂ່າວສານຟຣີ*ແລະ ເປັນຄວາມລັບແລະການຊ່ວຍເຫຼືອກ່ຽວກັບໂຣກມະເຮັງ, ວັນຈັນເຖິງວັນສຸກ 9.00 ໂມງເຊົ້າ – 5.00 ໂມງແລງ

- ໂທຫາ Cancer Council ທີ່ເບີ **13 11 20**
- ເວົ້າລົມທາງອອນໄລນ໌ ທີ່ **cancersa.org.au**
- ສົ່ງອີເມລໄປທີ່ **askanurse@cancersa.org.au**

ບໍລິການແປພາສາຟຣີ* ມີໄວ້ໃຫ້ທີ່ເບີ **131 450**

*ຄ່າໂທຂອງທ້ອງຖິ່ນ

ທົບທວນຄືນ ໃນເດືອນ ທັນວາ 2022

Lao | ພາສາລາວ

Cancer Council SA

# ການກວດມະເຮັງແບບຄັດກອງ

## ວິທີການຊອກຫາມະເຮັງແຕ່ຕົ້ນໆ



ການກວດພົບມະເຮັງໃນລະຍະຕົ້ນໆ

ຂໍ້ມູນ ແລະ ການຊ່ວຍເຫຼືອອູ້ມຊູ

**13 11 20**

**cancersa.org.au**




# ການກວດຫາມະເຮັງລຳໄສ້

## ມະເຮັງລຳໄສ້ມັກຈະພັດທະນາໂດຍບໍ່ມີອາການໃດໆ. ຖ້າພົບມະເຮັງລຳໄສ້ຢູ່ໃນຂັ້ນຕົ້ນ, ໂອກາດທີ່ຈະລອດຊີວິດແມ່ນສູງຂຶ້ນ.

ການກວດຫາໂຣກມະເຮັງລຳໄສ້ປະກອບດ້ວຍການກວດເລືອດຈາກອາຈົມ (Faecal Occult (FOBT)). FOBT ຊອກຫາເລືອດໃນອາຈົມຂອງທ່ານທີ່ບໍ່ສາມາດເຫັນໄດ້. ຖ້າພົບເລືອດ, ທ່ານອາດຕ້ອງກວດຕື່ມອີກເພື່ອຫາສາເຫດຂອງເລືອດ.

ທຸກໆ 2 ປີ ໂຄງການກວດຄັດກອງໂຣກມະເຮັງລຳໄສ້ແຫ່ງຊາດຈະສົ່ງຊຸດກວດ FOBT ໃຫ້ກັບຊາວອອສເຕຣລຽນທຸກຄົນທີ່ມີອາຍຸ 50-74 ປີ.

### Cancer Council SA ແນະນຳໃຫ້ທ່ານ:

- ເຂົ້າຮັບການກວດມະເຮັງລຳໄສ້ທຸກໆ 2 ປີ ຖ້າທ່ານມີອາຍຸ 50 ປີຂຶ້ນໄປ.
- ໄປພົບນາຍໝໍຂອງທ່ານຫາກທ່ານມີອາການ. ອາການຕ່າງໆລວມມີການມີເລືອດອອກທາງຮູທະວານ, ເຫັນເລືອດຢູ່ໃນຫ້ອງນ້ຳ ຫຼື ຢູ່ໃນເຈ້ຍຫ້ອງນ້ຳຫຼັງຈາກຂັບຖ່າຍອອກ ຫຼື ທ້ອງຜູກ ຫຼື ຖອກທ້ອງ ໂດຍບໍ່ຮູ້ສາເຫດ.
- ໄປພົບນາຍໝໍຂອງທ່ານຫາກທ່ານມີປະຫວັດຄົນໃນຄອບຄົວເປັນມະເຮັງລຳໄສ້.

**ຖ້າທ່ານມີອາຍຸ 50-74 ປີ, ມັນເປັນສິ່ງສຳຄັນທີ່ທ່ານຕ້ອງຕື່ມຟອມແລະສົ່ງຄືນ ຊຸດກວດ FOBT ຂອງທ່ານເມື່ອມັນມາຮອດໂດຍທາງໄປສະນີຈາກໂຄງການກວດຄັດກອງໂຣກມະເຮັງລຳໄສ້ແຫ່ງຊາດ.**

ເຂົ້າໄປເບິ່ງທີ່ **ncsr.gov.au** ຫຼື ໂທຫາຫ້ອງການລົງທະບຽນກວດໂຣກມະເຮັງແຫ່ງຊາດ ທີ່ເບີ **1800 627 701** ເພື່ອ:

- ຊອກຮູ້ວ່າເມື່ອໃດທີ່ໂຄງການກວດຄັດກອງມະເຮັງລຳໄສ້ແຫ່ງຊາດຈະສົ່ງຊຸດກວດ FOBT ຟຣີມາໃຫ້ທ່ານ
- ຖ້າທ່ານເຮັດຊຸດກວດ FOBT ເສັຍ ຫຼືເປ້ເພ ຈົ່ງສັ່ງເອົາຊຸດກວດໃໝ່ມາແທນ ຫຼື ຖ້າມັນໝົດອາຍຸແລ້ວ
- ດາວໂຫຼດເອົາຊັບພະຍາກອນເພີ້ມເຕີມເປັນພາສາຂອງທ່ານ




# ການກວດຄັດກອງມະເຮັງເຕົ້ານົມ

## ມະເຮັງເຕົ້ານົມສາມາດພັດທະນາໄດ້ໂດຍບໍ່ມີອາການທີ່ສັງເກດເຫັນໄດ້. ຖ້າພົບມະເຮັງເຕົ້ານົມໃນໄລຍະຕົ້ນໆ ໂອກາດທີ່ຈະລອດຊີວິດກໍສູງຂຶ້ນ.

ການກວດຄັດກອງເຕົ້ານົມແມ່ນການ X-ray ເຕົ້ານົມ. ການກວດຄັດກອງເຕົ້ານົມເປັນປະຈຳສາມາດກວດພົບມະເຮັງເຕົ້ານົມແຕ່ຕົ້ນໆ, ແລະເລື້ອຍໆກ່ອນທີ່ທ່ານຈະສາມາດຮູ້ສຶກໄດ້ໃນ ຂະນະທີ່ມັນມີຂະໜາດນ້ອຍແລະງ່າຍຕໍ່ການປິ່ນປົວ. ໃນປັດຈຸບັນການກວດເຕົ້ານົມແມ່ນການທົດສອບທີ່ດີທີ່ສຸດໃນການຄົ້ນຫາມະເຮັງເຕົ້ານົມໃນແມ່ຍິງທີ່ບໍ່ມີອາການ.

### Cancer Council SA ແລະ BreastScreen SA ແນະນຳໃຫ້ທ່ານ:

- ຮັບການກວດເຕົ້ານົມຟຣີທຸກໆສອງປີໂດຍ BreastScreen SA ຖ້າທ່ານມີອາຍຸ 50 ເຖິງ 74 ປີ. ຖ້າທ່ານມີອາຍຸ 40-49 ຫຼື 75 ປີຂຶ້ນໄປ, ທ່ານສາມາດໄດ້ຮັບການກວດເຕົ້ານົມໄດ້ຟຣີ.
- ກວດເບິ່ງການປ່ຽນແປງຂອງເຕົ້ານົມຂອງທ່ານເປັນປະຈຳເຖິງແມ່ນວ່າທ່ານຈະອາຍຸຕ່ຳກວ່າ 50 ປີ ຫຼື ມີການກວດຄັດກອງເຕົ້ານົມເປັນປະຈຳກໍຕາມ.
- ໃຫ້ໄປພົບນາຍໝໍໂດຍໄວເທົ່າທີ່ຈະໄວໄດ້ ຖ້າທ່ານສັງເກດເຫັນການປ່ຽນແປງໃດໆຂອງເຕົ້ານົມຂອງທ່ານ. ການປ່ຽນແປງຕ່າງໆລວມມີການມີກ້ອນໃນເຕົ້ານົມຫຼືການປ່ຽນແປງຂອງຂະໜາດ ຫຼື ຮູບຮ່າງຂອງເຕົ້ານົມຂອງທ່ານ.
- ໄປພົບນາຍໝໍ GP ຂອງທ່ານຫາກທ່ານມີປະຫວັດຄົນໃນຄອບຄົວເປັນມະເຮັງເຕົ້ານົມ.

**ໂທຫາ BreastScreen SA ທີ່ເບີ 13 20 50 ເພື່ອຈອງການກວດຄັດກອງເຕົ້ານົມຂອງທ່ານ ຟຣີ.**

ກະລຸນາບອກເຂົາເຈົ້າວ່າທ່ານຕ້ອງການນາຍພາສາໃນເວລາທຳການນັດໝາຍ.

ເຂົ້າເບິ່ງ **breastscreen.sa.gov.au**:

- ສຳລັບຂໍ້ມູນເພີ້ມເຕີມກ່ຽວກັບການກວດເຕົ້ານົມ
- ເພື່ອດາວໂຫຼດເອົາຊັບພະຍາກອນໃນພາສາຂອງທ່ານ.



# ການກວດມະເຮັງປາກມົດລູກ

## ມະເຮັງປາກມົດລູກສ່ວນໃຫຍ່ສາມາດປ້ອງກັນໄດ້ດ້ວຍການຜ່ານການກວດຄັດກອງປາກມົດລູກເປັນປະຈຳ.

ໃນປັດຈຸບັນມີສອງວິທີທີ່ທ່ານສາມາດມີການກວດປາກມົດລູກໄດ້.

1. ການກວດແບບເກັບກຳດ້ວຍຕົນເອງເຊິ່ງໃຊ້ໄມ້ດ້າມຍາວທີ່ມີສຳລີຢູ່ທາງປາຍເພື່ອເກັບກຳເອົາເຊລຂອງຕົນເອງອອກຈາກຊ່ອງຄອດ. ທ່ານສາມາດເຮັດການທົດສອບນີ້ເປັນແບບສ່ວນຕົວຢູ່ທີ່ຄລີນິກ ຂອງນາຍໝໍ ຫຼື ໃນບາງກໍລະນີທີ່ທ່ານສາມາດເຮັດການທົດສອບໄດ້ຢູ່ເຮືອນຖ້າຫາກວ່າໄດ້ຈັດການລ່ວງໜ້າກັບນາຍໝໍ GP ຂອງທ່ານ.
2. ຕົວຢ່າງທີ່ເກັບກຳໂດຍນາຍໝໍ ຫຼື ພະຍາບານ ຊຶ່ງສອດຄີມຖ່າງ ແລະ ເກັບກຳເອົາເຊລຈາກປາກມົດລູກ.

ທັງສອງທາງເລືອກແມ່ນມີຄວາມປອດໄພແລະມີປະສິດທິຜົນເທົ່າທຽມກັນ. ສົນທະນາກັບນາຍໝໍ ຫຼື ພະຍາບານ ຂອງທ່ານກ່ຽວກັບທາງເລືອກທີ່ເໝາະສົມສຳລັບທ່ານ.

ເມື່ອທ່ານໄດ້ທຳການນັດໝາຍຂອງທ່ານແລ້ວ, ທ່ານອາດຈະຕ້ອງການ:

- ຖາມວ່າມີການເກັບເຊລດ້ວຍຕົວເອງຢູ່ຄລີນິກບໍ
- ຖາມກ່ຽວກັບຄ່າບໍລິການທີ່ອາດເປັນໄປໄດ້
- ຂໍເອົານາຍໝໍ GP ຍິງ ຫຼື ພະຍາບານຍິງ
- ຂໍນາຍພາສາຖ້າທ່ານຕ້ອງການ
- ຂໍການນັດໝາຍສອງຄັ້ງ.

### Cancer Council SA ແລະ Wellbeing SA ແນະນຳໃຫ້:

- ແມ່ຍິງທຸກຄົນ ແລະ ຜູ້ທີ່ມີມົດລູກ ອາຍຸ 25-74 ປີ, ຜູ້ທີ່ເຄີຍມີເພດສຳພັນຄວນກວດຄັດກອງປາກມົດລູກທຸກໆຫ້າປີ.
- ເດັກອາຍຸ 12-13 ປີ ໄດ້ຮັບການສັກວັກຊີນປ້ອງກັນ ໄວຣັສ ເນື້ອງອກເຍື່ອບຸຜິວໃນມະນຸດ (Human papillomavirus (HPV)). ວັກຊີນດັ່ງກ່າວແມ່ນມີໃຫ້ຟຣີໃນໂຮງຮຽນມັດທະ ຍົມ ຫຼື ຢູ່ຄລີນິກນາຍໝໍ ພາຍໃຕ້ໂຄງການສັກຢາປ້ອງກັນໂຣກແຫ່ງຊາດ.
- ທ່ານໄປພົບນາຍໝໍຂອງທ່ານຫາກທ່ານມີອາການຕ່າງໆເຊັ່ນ: ເລືອດອອກຜິດປົກກະຕິ ຫຼື ມີອາການເຈັບໃນເວລາມີເພດສຳພັນ.

ເຂົ້າໄປເບິ່ງທີ່ **wellbeingsa.sa.gov.au/cervicalscreening** ຫຼື ຊອກເບິ່ງການຄົ້ນຫາມະເຮັງປາກມົດລູກໃນລະຍະຕົ້ນໆ ທີ່ **cancersa.org.au** ສຳລັບຂໍ້ມູນເພີ່ມເຕີມ.